ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-------------=====☐☐☐=====-------------

ເມືອງສີສັດຕະນາກ

ຫ້ອງວ່າການ

102

ເລກທີ........./ ຫວກ. ສສນ

ວັນທີ 08 MAY 2018

## ໜັງສືທາງລັດຖະການ

**ຮຽນ:** ທ່ານຫົວໜ້າກອງບັນຊາການ ປກຊ-ປກສ, ຫົວໜ້າຫ້ອງການອ້ອມຂ້າງ, ບ້ານ 37 ບ້ານ, ຜູ້ປະກອບການ, ທຸລະກິດຊາວຄ້າຂາຍ ພາຍໃນເມືອງສີສັດຕະນາກ.

**ເລື່ອງ:** ກົມພິມຈຳໜ່າຍ ກະຊວງຖະແຫຼງຂ່າວ, ວັດຖະນະທຳ ແລະ ທ່ອງທ່ຽວ ( ວາລະສານ ວັນນະສິນ ) ຂໍຮ່ວມມືໃນການຈຳໜ່າຍປຶ້ມ " ຮ່ວມຊຸມຄອງດຽວກັນ " ແລະ " ວາລະສານ ວັນນະສິນ " ພາຍໃນເມືອງສີສັດຕະນາກ.

- **ອີງຕາມ:** ໃບສະເໜີ ສະບັບເລກທີ 208/ ວສນ, ລົງວັນທີ 13 ພະຈິກ 2017 ຂອງວາລະສານ ວັນນະສິນ, ກົມພິມຈຳໜ່າຍ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.
- **ອີງຕາມ:** ໜັງສືທາງລັດຖະການ ຂອງຫ້ອງວ່າການນະຄອນຫຼວງ ສະບັບເລກທີ 0269/ ຫວກ. ນວ, ລົງວັນທີ 23 ກຸມພາ 2018.
- **ອີງຕາມ:** ຄຳເຫັນຊີ້ນຳຂອງທ່ານເຈົ້າເມືອງສີສັດຕະນາກ ຄັ້ງວັນທີ 26/ 04/ 2018.

ຫ້ອງວ່າການ ເມືອງສີສັດຕະນາກ ຂໍຖືເປັນກຽດສະເໜີການຊີ້ນຳ ຂອງຂັ້ນເທິງມາຍັງທ່ານຊາບດັ່ງນີ້: ເຫັນດີໃຫ້ກົມພິມຈຳໜ່າຍ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເຄື່ອນໄຫວຈຳໜ່າຍ ( ວາລະສານ ວັນນະສິນ ) ກັບພາກສ່ວນຕ່າງໆ ພາຍໃນເມືອງສີສັດຕະນາກ ຕາມເງື່ອນໄຂຄວາມສາມາດ ແລະ ສະໝັກໃຈຊື້ຕົວຈິງ " ປຶ້ມຮ່ວມຊຸມຄອງດຽວກັນ " ໃນລາຄາ 50.000 ກີບ/ 01 ຫົວ ແລະ " ວາລະສານ ວັນນະສິນ " ໃນລາຄາ 15.000 ກີບ/ 01 ຫົວ.

ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານເພື່ອຊາບ ແລະ ພິຈາລະນາຕາມທາງຄວນດ້ວຍ.

**ຫົວໜ້າຫ້ອງວ່າການ ເມືອງສີສັດຕະນາກ**

ຫ້ອງວ່າການ

ພອນສິນ ສາວະລີ

ບ່ອນສົ່ງ:

- ເຈົ້າເມືອງ-ຮອງເຈົ້າເມືອງທ່ານລະ 01 ສະບັບ.
- ກົມພິມຈຳໜ່າຍ 01 ສະບັບ.
- ວາລະສານ ວັນນະສິນ 01 ສະບັບ.
- ເກັບມ້ຽນສຳເນົາ 01 ສະບັບ.

ຕິດຕໍ່ພົວພັນ

020 52258449.

021 212425